ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ນາຍົກລັດຖະມົນຕີ ເລກທີ 96 / ນຍ

ນະຄອນຫຼວງວຽງຈັນ, ວັນທີ 09.03.2017

# ດຳລັດ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງສາທາລະນະສຸກ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາໂຄງປະກອບກົງຈັກ ແລະ ບຸກຄະລາກອນ ຂອງລັດຖະບານ ສະບັບເລກທີ 05/ສພຊ, ລົງວັນທີ 20 ເມສາ 2016;
- ອີງຕາມ ໜັງສືສະເໜີຂອງກະຊວງສາທາລະນະສຸກ ສະບັບເລກທີ 0266/ສທ, ລົງວັນທີ 10 ກຸມພາ 2017;
- ອີງຕາມໜັງສືສະເໜີຂອງກະຊວງພາຍໃນ ສະບັບເລກທີ 53/ພນ, ລົງວັນທີ 23 ກຸມພາ 2017;

## ນາຍົກລັດຖະມົນຕີອອກດຳລັດ

## ໝວດທີ1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສາທາລະນະສຸກ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ໃນການຄຸ້ມຄອງ, ກວດກາ, ຊຸກຍູ້ສົ່ງເສີມ ແລະ ພັດທະນາວຽກງານສາທາລະນະສຸກແຫ່ງຊາດ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ກະຊວງສາທາລະນະສຸກ ຂຽນເປັນຕົວອັກສອນຫຍໍ້ “ສທ” ແມ່ນກົງຈັກໜຶ່ງຂອງລັດຖະບານ, ມີພາລະບົດບາດ ເປັນເສນາທິການໃຫ້ແກ່ລັດຖະບານຄຸ້ມຄອງມະຫາພາກ ກ່ຽວກັບວຽກງານສາທາລະນະສຸກ, ຊີ້ນຳການກໍ່ສ້າງ ແລະ ບຳລຸງສ້າງບຸກຄະລາກອນຂະແໜງສາທາລະນະສຸກ ໃນຂອບເຂດທົ່ວປະເທດ.

## ໝວດທີ2
## ໜ້າທີ່ແລະຂອບເຂດສິດ

**ມາດຕາ 3 ໜ້າທີ່**

ກະຊວງສາທາລະນະສຸກ ມີໜ້າທີ່ ດັ່ງນີ້:

1. ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ, ລັດຖະບັນຍັດຂອງປະທານປະເທດ ແລະ ນິຕິກຳຕ່າງໆ ທີ່ລັດຖະບານວາງອອກ;
2. ຄົ້ນຄວ້າ ແລະ ຫັນເອົາແນວທາງນະໂຍບາຍຂອງພັກ, ນະໂຍບາຍ, ຍຸດທະສາດ, ແຜນການ ແລະ ມະຕິ ຕົກລົງຂອງລັດຖະບານ ກ່ຽວກັບວຽກງານສາທາລະນະສຸກ ມາເປັນແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ພ້ອມທັງຮັບຜິດຊອບໃນການຈັດຕັ້ງປະຕິບັດ ໃຫ້ປະກົດຜົນເປັນຈິງ ແລະ ໄດ້ຮັບຜົນດີ;
3. ຄົ້ນຄວ້າສ້າງ, ປັບປຸງກົດໝາຍ ແລະ ນິຕິກຳຕ່າງໆ ດ້ານສາທາລະນະສຸກ ເພື່ອສະເໜີຕໍ່ລັດຖະບານ ພິຈາລະນາຮັບຮອງ; ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ເພື່ອຄຸ້ມຄອງມະຫາພາກ ໃນຂະແໜງສາທາລະນະສຸກ ພ້ອມທັງແນະນຳ, ຕິດຕາມ ແລະ ກວດການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;
4. ສົ່ງເສີມການຄົ້ນຄວ້າ, ເຜີຍແຜ່ ແລະ ນຳໃຊ້ຜົນສຳເລັດດ້ານວິທະຍາສາດ ແລະ ເຕັກໂນໂລຊີຂອງພາຍໃນ ແລະ ຕ່າງປະເທດ ເພື່ອເປັນພື້ນຖານເຂົ້າໃນວຽກງານສາທາລະນະສຸກ;
5. ສະໜອງການບໍລິການດ້ານອະນາໄມ ແລະ ສົ່ງເສີມສຸຂະພາບ, ການຄວບຄຸມພະຍາດຕິດຕໍ່, ວຽກງານອາຫານ ແລະ ຢາ, ຜະລິດຕະພັນການແພດ ແລະ ເຄື່ອງສຳອາງ, ວຽກງານປິ່ນປົວ ແລະ ຟື້ນຟູໜ້າທີ່ການໃຫ້ປະຊາຊົນບັນດາເຜົ່າຢ່າງມີຄຸນນະພາບ;
6. ຄຸ້ມຄອງກວດກາສະຖານທີ່ບໍລິການປິ່ນປົວຂອງລັດ ແລະ ເອກະຊົນ, ການຢັ້ງຢືນໃບປະກອບວິຊາຊີບໃຫ້ຜູ້ປະກອບວິຊາຊີບປິ່ນປົວໃຫ້ຖືກຕ້ອງ ກັບລະບຽບກົດໝາຍທີ່ວາງອອກ;
7. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ສົ່ງເສີມທຸກຫົວໜ່ວຍການຈັດຕັ້ງຂອງລັດ, ເອກະຊົນ ທີ່ດຳເນີນທຸລະກິດ, ການບໍລິການດ້ານອາຫານ, ຢາ, ເຄື່ອງສຳອາງ ແລະ ອຸປະກອນ-ຜະລິດຕະພັນການແພດໃຫ້ຖືກຕ້ອງຕາມລະບຽບກົດໝາຍ;
8. ກໍ່ສ້າງ, ບຳລຸງຊັບພະຍາກອນມະນຸດ ໃນຂະແໜງສາທາລະນະສຸກ, ຄົ້ນຄວ້ານຳສະເໜີລັດຖະບານ ພິຈາລະນາຍຸດທະສາດ, ແຜນການພັດທະນາລະບົບພື້ນຖານໂຄງລ່າງ ກ່ຽວກັບການກໍ່ສ້າງຊັບພະຍາກອນມະນຸດ ຂອງຂະແໜງການສາທາລະນະສຸກ; ຄຸ້ມຄອງມະຫາວິທະຍາໄລ, ບັນດາວິທະຍາໄລ ແລະ ສະຖາບັນການສຶກສາຕ່າງໆ ຂອງຂະແໜງສາທາລະນະສຸກ; ຄຸ້ມຄອງ, ຊີ້ນຳການສ້າງຫຼັກສູດ, ປຶ້ມຕຳລາສຳລັບການຮຽນ ແລະ ການສອນ ຂອງຂະແໜງສາທາລະນະສຸກ;
9. ຄຸ້ມຄອງ, ສຶກສາອົບຮົມ, ກໍ່ສ້າງ, ບຳລຸງສ້າງ, ສັບຊ້ອນ, ແລະ ປະຕິບັດນະໂຍບາຍຕໍ່ພະນັກງານ ຢ່າງຖືກຕ້ອງ ຕາມນະໂຍບາຍທີ່ພັກ ແລະ ລັດຖະບານໄດ້ປະກາດໃຊ້; ຄົ້ນຄວ້າ ແລະ ປະກາດໃຊ້ລະບອບແບບແຜນວິທີເຮັດວຽກຂອງກະຊວງ, ລະບຽບການຄຸ້ມຄອງດ້ານຕ່າງໆ ລວມທັງໂຄງປະກອບການຈັດຕັ້ງ ແລະ ການກຳນົດຕຳແໜ່ງງານ ຂອງຂະແໜງສາທາລະນະສຸກ;
10. ສ້າງ ແລະ ປັບປຸງຕາໜ່າງສາທາລະນະສຸກໃນຂອບເຂດທົ່ວປະເທດ, ຊີ້ນຳ ແລະ ຄຸ້ມຄອງຕາມສາຍຕັ້ງການປະຕິບັດວຽກງານ ແລະ ບຸກຄະລາກອນ ຂອງຂະແໜງການຕົນ ໂດຍປະສານສົມທົບກັບອົງການປົກຄອງທ້ອງຖິ່ນ;
11. ຊຸກຍູ້ ແລະ ສ້າງເງື່ອນໄຂ ເພື່ອອຳນວຍຄວາມສະດວກໃຫ້ບັນດາອົງການຈັດຕັ້ງທີ່ຂຶ້ນກັບກະຊວງ ທັງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ, ບັນດາຫົວໜ່ວຍບໍລິຫານ ແລະ ບໍລິການດ້ານການແພດ, ການຢາທັງຂອງລັດ ແລະ ເອກະຊົນໃຫ້ປະຕິບັດພາລະໜ້າທີ່ຂອງຕົນ ຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

12. ຕິດຕາມ ແລະ ກວດກາບັນດາອົງການຈັດຕັ້ງສາທາລະນະສຸກຢູ່ທຸກໆຂັ້ນ ກ່ຽວກັບປະສິດທິພາບຂອງການປະຕິບັດງານ, ໃນການຄຸ້ມຄອງງົບປະມານ, ການຄຸ້ມຄອງພື້ນຖານວັດຖຸເຕັກນິກ, ການນຳໃຊ້ແຮງງານ ແລະ ບັນຫາອື່ນໆ ບົນພື້ນຖານລະບຽບກົດໝາຍ ແລະ ກຳນົດໝາຍເສດຖະກິດເຕັກນິກທີ່ລັດຖະບານວາງອອກ;
13. ສະຫຼຸບສັງລວມສະພາບການຈັດຕັ້ງປະຕິບັດແຜນການ, ວຽກງານຂະແໜງການຂອງຕົນ ເພື່ອລາຍງານຕໍ່ລັດຖະບານ ແລະ ນາຍົກລັດຖະມົນຕີ; ວິໄຈລະບົບສາທາລະນະສຸກໃຫ້ເຫັນຜົນກະທົບທາງດ້ານຕັ້ງໜ້າເພື່ອສົ່ງເສີມ ແລະ ດ້ານຫຍໍ້ທໍ້ ເພື່ອດັດແປງແກ້ໄຂໃຫ້ທັນເວລາ, ສັງລວມຂໍ້ມູນສະຖິຕິ ດ້ານສາທາລະນະສຸກ ແລະ ການແພດ ເພື່ອປະກາດໃຊ້ເປັນທາງການ;
14. ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຕ່າງໆ ເພື່ອຍາດແຍ່ງການຊ່ວຍເຫຼືອ ດ້ານທຶນຮອນ ແລະ ເຕັກນິກວິຊາການມາຮ່ວມມືພັດທະນາຂະແໜງສາທາລະນະສຸກ ບົນພື້ນຖານຫຼັກການ, ລະບຽບການ ແລະ ຕາມການມອບໝາຍຂອງລັດຖະບານ;
15. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 4 ຂອບເຂດສິດ**

ກະຊວງສາທາລະນະມີສິດ ດັ່ງນີ້:

1. ສ້າງຕັ້ງ, ປັບປຸງ ຫຼື ຍຸບເລີກການຈັດຕັ້ງຂັ້ນຕ່າງໆ ທີ່ຂຶ້ນກັບສິດຄຸ້ມຄອງຂອງກະຊວງສາທາລະນະສຸກ;
2. ແຕ່ງຕັ້ງ, ເລື່ອນຊັ້ນ, ຍົກຍ້າຍໜ້າທີ່, ປົດຕຳແໜ່ງ, ໃສ່ວິໄນ ແລະ ປະຕິບັດນະໂຍບາຍຕ່າງໆຕໍ່ພະນັກງານ-ລັດຖະກອນຂັ້ນຕ່າງໆທີ່ຕົນຄຸ້ມຄອງ; ສຳລັບກໍລະນີຢູ່ທ້ອງຖິ່ນ ຕ້ອງປຶກສາຫາລື ແລະ ຄວາມເປັນເອກະພາບ ກັບອົງການປົກຄອງທ້ອງຖິ່ນເສຍກ່ອນ;
3. ອະນຸມັດໃຫ້ສ້າງຕັ້ງ, ອອກທະບຽນໃບປະກອບວິຊາຊີບ ໃຫ້ບັນດາຫົວໜ່ວຍບໍລິການດ້ານການແພດ ແລະ ການຢາຂອງລວມໝູ່, ບຸກຄົນ ທັງຂອງລັດ ແລະ ຂອງເອກະຊົນຕາມກົດໝາຍ ແລະ ລະບຽບການທີ່ລັດ ແລະ ກະຊວງສາທາລະນະສຸກວາງອອກ;
4. ກວດກາ ແລະ ກວດການວຽກງານຕ່າງໆ ທີ່ກຳນົດໄວ້ໃນພາລະບົດບາດ, ສິດ ແລະ ໜ້າທີ່ຂອງກະຊວງສາທາລະນະສຸກ;
5. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການກ່ຽວກັບບັນຫາທີ່ນອນຢູ່ໃນພາລະບົດບາດ ແລະ ໜ້າທີ່ຂອງກະຊວງສາທາລະນະສຸກ;
6. ຮຽກໂຮມພະນັກງານນຳພາ, ພະນັກງານຄຸ້ມຄອງ ແລະ ນັກວິຊາການສາທາລະນະສຸກຂັ້ນຕ່າງໆ ມາເຂົ້າຮ່ວມປະຊຸມ ຫຼື ສ່ອງແສງວຽກງານ;
7. ອະນຸມັດໃຫ້ບັນດາກົມ, ສະຖາບັນ, ສູນວິຊາການຕ່າງໆຈັດຊຸດອົບຮົມ ຫຼື ສຳມະນາວິຊາການໃນແຕ່ລະໄລຍະ;
8. ສ້າງແຜນລາຍຮັບ ແລະ ລາຍຈ່າຍງົບປະມານການເງິນຂອງກະຊວງສາທາລະນະສຸກຕາມແຜນການທີ່ລັດຖະບານໄດ້ອະນຸມັດ;
9. ແຕ່ງຕັ້ງ ແລະ ຍຸບເລີກຄະນະກຳມະການ, ຄະນະຮັບຜິດຊອບໂຄງການຕ່າງໆ ເພື່ອປະຕິບັດໜ້າທີ່ສະເພາະໃດໜຶ່ງຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ ແລະ ການມອບໝາຍ;
10. ພົວພັນ, ເຊັນສັນຍາ, ອະນຸສັນຍາ, ບົດບັນທຶກກັບຕ່າງປະເທດ ຫຼື ອົງການຈັດຕັ້ງສາກົນບົນພື້ນຖານທີ່ໄດ້ຮັບອະນຸມັດຈາກລັດຖະບານຢ່າງເປັນທາງການ;
11. ປະຕິບັດສິດອື່ນໆ ຕາມທີ່ລັດຖະບານມອບໝາຍໃຫ້ສະເພາະ ແລະ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ລະບຽບກົດໝາຍ;

## ໝວດທີ3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ກ. ໂຄງປະກອບກົງຈັກ ຂອງກະຊວງສາທາລະນະສຸກ ມີ 01 ຫ້ອງການ ແລະ 09 ກົມ ດັ່ງລຸ່ມນີ້:

1. ຫ້ອງການ;
2. ກົມຈັດຕັ້ງ ແລະ ພະນັກງານ;
3. ກົມກວດກາ;
4. ກົມແຜນການ ແລະ ການຮ່ວມມື;
5. ກົມການເງິນ;
6. ກົມການສຶກສາສາທາລະນະສຸກ;
7. ກົມອະນາໄມ ແລະ ສົ່ງເສີມສຸຂະພາບ;
8. ກົມຄວບຄຸມພະຍາດຕິດຕໍ່;
9. ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ;
10. ກົມອາຫານແລະຢາ;

ນອກນີ້, ຍັງມີມະຫາວິທະຍາໄລ, ບັນດາໂຮງໝໍ, ສະຖາບັນ, ສູນ, ສະຖາບັນການສຶກສາ ແລະ ຫົວໜ່ວຍວິສາຫະກິດຈຳນວນໜຶ່ງ ທີ່ຂຶ້ນກັບກະຊວງສາທາລະນະສຸກ.

**ຂ. ກົງຈັກການຈັດຕັ້ງ ຂອງອົງການປົກຄອງທ້ອງຖິ່ນ ທີ່ຢູ່ພາຍໃຕ້ການຊີ້ນຳດ້ານວິຊາການຂອງກະຊວງສາທາລະນະສຸກ ປະກອບມີ:**

1. ພະແນກສາທາລະນະສຸກຂັ້ນແຂວງ;
2. ຫ້ອງການສາທາລະນະສຸກຂັ້ນເມືອງ;

ສຳລັບການສ້າງຕັ້ງ ຫຼື ຍຸບເລີກກົງຈັກເຫຼົ່ານີ້ ແມ່ນປະຕິບັດຕາມກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ.

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ໂຄງກະກອບບຸກຄະລາກອນ ຂອງກະຊວງສາທາລະນະສຸກ ປະກອບດ້ວຍ:

1. ລັດຖະມົນຕີ 1 ທ່ານ ຮັບຜິດຊອບຕໍ່ລັດຖະບານ ແລະ ນາຍົກລັດຖະມົນຕີ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງໃນການປະຕິບັດພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງກະຊວງຕາມດຳລັດສະບັບນີ້;

   ໃນເວລາຕິດຂັດ ລັດຖະມົນຕີ ຕ້ອງມອບສິດເປັນລາຍລັກອັກສອນ ໃຫ້ຮອງລັດຖະມົນຕີທ່ານໃດໜຶ່ງເປັນຜູ້ຮັກສາການແທນ;
2. ຮອງລັດຖະມົນຕີຈຳນວນໜຶ່ງ ຊ່ວຍລັດຖະມົນຕີ ໃນການຊີ້ນຳວຽກງານຂອງກະຊວງ, ຮັບຜິດຊອບວຽກງານໃດໜຶ່ງ ຕາມການແບ່ງງານພາຍໃນຄະນະນຳກະຊວງ ແລະ ການມອບໝາຍ ຂອງລັດຖະມົນຕີ;

   ຮອງລັດຖະມົນຕີເປັນຜູ້ຮັກສາການແທນ ໃນເວລາລັດຖະມົນຕີຕິດຂັດ ແລະ ຕ້ອງລາຍງານວຽກງານ ທີ່ໄດ້ປະຕິບັດໃນໄລຍະຮັກສາການ ໃຫ້ລັດຖະມົນຕີ ພາຍຫຼັງກັບມາປະຈຳການ;
3. ຫົວໜ້າຫ້ອງການ, ຫົວໜ້າກົມ, ຮອງຫົວໜ້າຫອງການ, ຮອງຫົວໜ້າກົມ, ຫົວໜ້າ, ຮອງຫົວໜ້າພະແນກ ແລະ ລັດຖະກອນວິຊາການ ຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ;

ສຳລັບການແຕ່ງຕັ້ງ, ບັນຈຸ, ສັບຊ້ອນ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການ ທີ່ກຳນົດ;

## ໝວດທີ4
### ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 7 ຫຼັກການ**

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບບັນຫາລວມຂອງກະຊວງສາທາລະນະສຸກ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ-ລັດຖະກອນທຸກລະດັບ;
3. ທຸກການເຄື່ອນໄຫວຂອງກະຊວງ ແລະ ພະນັກງານ-ລັດຖະກອນ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງລັດຖະບານ, ນໍາເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ;

**ມາດຕາ 8 ແບບແຜນວິທີເຮັດວຽກ**

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ; ປະຕິບັດ ແລະ ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ;
2. ເຮັດວຽກມີການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້-ຜົນເສຍພ້ອມທັງປະຕິບັດລະບອບລາຍງານສ່ອງແສງຢ່າງເຂັ້ມງວດ;
3. ປະສານງານ ແລະ ສົມທົບຢ່າງແໜ້ນແຟ້ນ ກັບທຸກຂະແໜງການທັງສູນກາງ, ທ້ອງຖິ່ນ ແລະ ອົງການຈັດຕັ້ງຕ່າງໆຕາມພາລະບົດບາດ, ສິດ, ໜ້າທີ່ ແລະ ຕາມການມອບໝາຍ ຂອງລັດຖະບານ ຫຼື ນາຍົກລັດຖະມົນຕີ ເພື່ອແນໃສ່ໝູນໃຊ້ກໍາລັງແຮງຂອງທຸກພາກສ່ວນ ເພື່ອພັດທະນາວຽກງານຂອງຂະແໜງສາທາລະນະສຸກ; ປະຕິບັດການພົວພັນປະສານງານພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງກັບລະບຽບຫຼັກການ;
4. ປະຕິບັດລະບອບປະຊຸມປະຈໍາເດືອນ, 3 ເດືອນ, 6 ເດືອນ ຫຼື ປະຈໍາປີ ແລະ ປະຕິບັດລະບອບລາຍງານໃຫ້ລັດຖະບານ ແລະ ນາຍົກລັດຖະມົນຕີ ເປັນປົກກະຕິ.

## ໝວດທີ5
### ບົດບັນຍັດສຸດທ້າຍ

**ມາດຕາ 9 ງົບປະມານ, ຕາປະທັບ ແລະ ກາໝາຍ**

ກະຊວງສາທາລະນະສຸກມີງົບປະມານ, ຕາປະທັບ ແລະ ກາໝາຍເປັນຂອງຕົນເອງ ເພື່ອເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 10 ການຜັນຂະຫຍາຍ**

ມອບໃຫ້ລັດຖະມົນຕີກະຊວງສາທາລະນະສຸກ ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ, ບັນດາກົມ, ບັນດາສະຖາບັນ, ໂຮງໝໍ, ສູນ, ສະຖາບັນການສຶກສາສາທາລະນະສຸກ, ຫົວໜ່ວຍວິສາຫະກິດ, ພະແນກສາທາລະນະສຸກຂັ້ນແຂວງ, ຫ້ອງການສາທາລະນະສຸກຂັ້ນເມືອງ ແລະ ອົງການຈັດຕັ້ງຕ່າງໆທີ່ຂຶ້ນກັບກະຊວງສາທາລະນະສຸກ ໃຫ້ລະອຽດ, ຈະແຈ້ງ, ຮັດກຸມ; ກໍານົດຕໍາແໜ່ງງານຂອງກະຊວງ ໃຫ້ມີຄວາມ ເໝາະສົມ ໂດຍຜ່ານການຮັບຮອງຈາກກະຊວງກ່ຽວຂ້ອງ.

**ມາດຕາ 11 ການຈັດຕັ້ງປະຕິບັດ**

ກະຊວງສາທາລະນະສຸກ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ແລະຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 12 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສາທາລະນະສຸກ ສະບັບເລກທີ178/ນຍ, ລົງວັນທີ 05ເມສາ 2012.

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ